ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ນາຍົກລັດຖະມົນຕີ ເລກທີ 52 / ນຍ

**ດຳລັດ**

**ວ່າດ້ວຍການຈົດທະບຽນເອກະສານ**

----------------

ອີງຕາມລັດຖະທຳມະນູນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;

ອີງຕາມກົດໝາຍເລກທີ 01/90/ສປສ ລົງວັນທີ 27/6/90 ວ່າດ້ວຍກຳມະສິດ;

ອີງຕາມກົດໝາຍເລກທີ 02/90/ສປສ ແລະ ກົດໝາຍເລກທີ 03//09/ສປສ ລົງວັນທີ 27/6/90 ວ່າດ້ວຍຂໍ້ຜູກພັນໃນສັນຍາ, ມູນມໍລະດົກ ແລະ ພື້ນຖານຂອງການສືບມູນມໍລະດົກ;

ອີງຕາມມະຕິຕົກລົງ ຂອງສະພາລັດຖະມົນຕີ ເລກທີ 47/ປສລ ລົງວັນທີ 26/6/8ອ ວ່າດ້ວຍລະບອບພາສີອາກອນຂອງລັດ;

ອີງຕາມຄຳສະເໜີ ຂອງລັດຖະມົນຕີກະຊວງການເງິນ;

ນາຍົກລັດຖະມົນຕີ ອອກກຳລັດ :

ໝວດ I - <u>ຄວາມໝາຍ ແລະ ຫຼັກການຈົດທະບຽນ.</u>

<u>ມາດຕາ 1</u> : ການຈົດທະບຽນເອກະສານ ແມ່ນການຈົດເນື້ອໃນຫຍໍ້ຂອງເອກະສານ ເຂົ້າໃນປຶ້ມທະບຽນ ເພື່ອຈຸດປະສົງ :

- ເກັບກຳສະຖິຕິການເຄື່ອນໄຫວທາງເສດຖະກິດ ແລະ ສັງຄົມ;
- ເຮັດໃຫ້ເອກະສານມີຄຸນຄ່າທາງດ້ານກົດໝາຍ;
- ຮັບປະກັນການປົກປັກຮັກສາເອກະສານ ເພື່ອຄວາມສະດວກໃຫ້ແກ່ການແກ້ໄຂຄະດີ;
- ສ້າງລາຍຮັບເຂົ້າງົບປະມານ ແນ່ໃສ່ຮັບໃຊ້ພາລະກິດປົກປັກຮັກສາ ແລະ ສ້າງສາປະເທດ.ຊາດ

<u>ມາດຕາ 2</u> : ເພື່ອໃຫ້ມີຜົນສັກສິດ ແລະ ຄຸນຄ່າທາງດ້ານກົດໝາຍເອກະສານທຸກສະນິດ ກ່ຽວກັບການໂອນກຳມະສິດ, ຊົມໃຊ້ຊັບ, ການໃຫ້ສິດແກ່ບຸກຄົນ ຫລື ນິຕິບຸກຄົນ, ກົດລະບຽບຂອງບໍລິສັດ ແລະ ອົງການຈັດຕັ້ງຕ່າງໆ, ສັນຍາ, ຄຳຕັດສິນຂອງສານແພ່ງ ລ້ວນແຕ່ຕ້ອງໄດ້ຈົດທະບຽນ. ເອກະສານ

ທີ່ໄດ້ຜ່ານການຈົດທະບຽນແລ້ວນັ້ນ ແມ່ນມີຄຸນຄ່າທາງດ້ານກົດໝາຍ ຈົນກວ່າຈະມີຫລັກຖານກົງກັນຂ້າມ.

<u>ມາດຕາ 3</u> : ເອກະສານທີ່ນຳມາຈົດທະບຽນນັ້ນ ຕ້ອງໃຫ້ຖືກຕ້ອງຕາມລະບຽບກົດໝາຍ ແລະ ໄດ້ຜ່ານການຢັ້ງຢືນຈາກອົງການທີ່ມີສິດໜ້າທີ່ກ່ຽວຂ້ອງ.

<u>ມາດຕາ 4</u> : ເອກະສານທີ່ຕ້ອງຈົດທະບຽນ ແບ່ງອອກເປັນສອງປະເພດ ຄື:

- ເອກະສານທີ່ຕ້ອງນຳມາຈົດທະບຽນ ຕາມກຳນົດເວລາ;
- ເອກະສານທີ່ນຳມາຈົດທະບຽນດ້ວຍຄວາມສະມັກໃຈ

ຄ່າຈົດທະບຽນທີສອງປະເພດ :

- ປະເພດຕາຍຕົວ.
- ປະເພດຄິດໄລ່ຕາມມູນຄ່າ.

<u>ມາດຕາ 5</u> : ປະເພດເອກະສານ ທີ່ຄິດໄລ່ຄ່າຈົດທະບຽນຕາຍຕົວ ໄດ້ແກ່ເອກະສານທີ່ບໍ່ມີ :

- ການໂອນກຳມະສິດ;
- ການໂອນສິດນຳໃຊ້ຊັບເຄື່ອນທີ່ ແລະ ຄົງທີ່;
- ການຕັດສິນໃຫ້ຈ່າຍເງິນ;
- ການເອົາຊັບເຂົ້າມາເປັນທຶນການຄ້າ;
- ການເອົາຊັບສ່ວນຕົວມາເຂົ້າກັນໃນກໍລະນີສ້າງຄອບຄົວ ເພື່ອເປັນກຳມະສິດລວມຂອງຄູ່ຜົວເມັຍ;
- ການຮັບເໝົາຂາຍສິ່ງຂອງ;
- ການຮັບເໝົາກໍ່ສ້າງ ແລະ ອື່ນໆ ທີ່ບົ່ງໄວ້ໃນລະບຽບກົດໝາຍ.

<u>ມາດຕາ 6</u> : ປະເພດເອກະສານ ທີ່ຄິດໄລ່ຄ່າຈົດທະບຽນ ຕາມມູນຄ່າມີດັ່ງນີ້:

- ເອກະສານໂອນກຳມະສິດຊັບເຄື່ອນທີ່ ແລະ ຊັບຄົງທີ່ ນັບເອກະສານທີ່ພົວພັນເຖິງການໂອນໜີ້ໃຫ້ແກ່ກັນ;
- ຄຳຕັດສິນຂອງສານແພ່ງ ທີ່ຜູ້ໃຫ້ເສັຍຄະດີຈ່າຍເງິນ ຫລື ສິ່ງຊັບຄືນ;
- ເອກະສານກ່ຽວກັບການເອົາຊັບມາລວມເຂົ້າກັນ ເປັນທຶນຂອງບໍລິສັດການຄ້າ, ການລວມຊັບຂອງຄູ່ຜົວເມັຍ ໃນກໍລະນີສ້າງຄອບຄົວ;
- ເອກະສານ ກ່ຽວກັບການຢືມເງິນ ຫລື ຊັບ ໂດຍມີ ຫລື ບໍ່ມີດອກເບ້ຍ;
- ເອກະສານກ່ຽວກັບການຮັບເໝົາຂາຍສິ່ງຂອງ, ການຮັບເໝົາກໍ່ສ້າງ ແລະ ການບໍລິການອື່ນໆ;

- ເອກະສານ ກ່ຽວກັບການເຊົ່າຊັບ;
- ສັນຍາປະກັນໄພ ແລະ ເອກະສານອື່ນໆ.

<u>ມາດຕາ 7</u> : ຖ້າວ່າຢູ່ໃນເອກະສານອັນດຽວກັນ ການໂອນຫາກພົວພັນເຖິງວັດຖຸສິ່ງຂອງຫລາຍປະເພດແລ້ວ ຄ່າຈົດທະບຽນແມ່ນໃຫ້ຄິດໄລ່ຕາມແຕ່ລະປະເພດ ທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

<u>ມາດຕາ 8</u> : ໃນກໍລະນີທີ່ມີການໂອນຊັບຄົງທີ່ ແລະ ຊັບເຄື່ອນທີ່ໃນເອກະສານອັນດຽວກັນ ແລະ ມີມູນຄ່າລວມເປັນອັນດຽວກັນນັ້ນ ແມ່ນໃຫ້ໃຊ້ມູນຄ່າລວມເປັນພື້ນຖານໃນການຄິດໄລ່ຄ່າຈົດທະບຽນ ໂດຍນຳໃຊ້ຄ່າຈົດທະບຽນຂອງຊັບຄົງທີ່.

<u>ມາດຕາ 9</u> : ພື້ນຖານຄິດໄລ່ຄ່າຈົດທະບຽນ ຕາມມູນຄ່າ ແມ່ນໃຫ້ຖືເອົາມູນຄ່າຂອງຊັບທີ່ຖືກໂອນ ຫລື ມູນຄ່າຂອງສິດນຳໃຊ້ທີ່ຖືກໂອນໃນເວລາມາແຈ້ງຈົດທະບຽນນັ້ນ.

## ໝວດ II - <u>ຄ່າຈົດທະບຽນ.</u>

<u>ມາດຕາ 10</u> : ເອກະສານທີ່ຕ້ອງເສຍຄ່າຈົດທະບຽນຕາຍຕົວ ມີ ດັ່ງນີ້ :

<u>ເອກະສານທີ່ຕ້ອງເສຍຄ່າຈົດທະບຽນ 1.500 ກີບ</u> :

- ໜັງສືມອບສັນທະໃຫ້ກັນ ເພື່ອທຳກິດຈະການຕ່າງໆແທນຕົນ;
- ໜັງສືຕົກລົງແບ່ງປັນສິນສົມສ້າງ;
- ໜັງສືຢັ້ງຢືນການຮັບເອົາເດັກມາເປັນລູກລ້ຽງ;
- ໜັງສືມອບກຳມະສິດເປົ່າ;
- ໜັງສືສັນຍາໝັ້ນໝາຍເອົາກັນເປັນຜົວເມັຍ;
- ສັນຍາການຄ້າ, ການຜະລິດ, ການບໍລິຫານ;
- ເອກະສານອື່ນໆ ທີ່ບໍ່ຈຳເປັນຕ້ອງຈົດທະບຽນແຕ່ຜູ້ກ່ຽວຂ້ອງນຳມາຂໍຈົດທະບຽນ.

<u>ເອກະສານທີ່ຕ້ອງເສຍຄ່າຈົດທະບຽນ 1.600 ກີບ</u> :

- ຈົດໝາຍບັນທຶກແບ່ງປັນທຶນບໍລິສັດທີ່ຖືກຍຸບ ໃຫ້ແກ່ຜູ້ຖືຫຸ້ນ ຖ້າວ່າທຶນນັ້ນຫາກມີມູນຄ່າ ແຕ່ 500.000 ກີບ ລົງມາ;
- ຈົດໝາຍບັນທຶກແບ່ງປັນຊັບລະຫວ່າງຜູ້ມີກຳມະສິດຮ່ວມ ຖ້າວ່າຊັບນັ້ນຫາກມີມູນຄ່າແຕ່ 500.000 ກີບ ລົງມາ;
- ໜັງສືຍົກເລີກການຄ້ຳປະກັນໜີ້ສິນດ້ວຍຫລັກຊັບ ຖ້າວ່າໜີ້ສິນດ້ວຍຫລັກຊັບ ຖ້າວ່າໜີ້ສິນນັ້ນ

ຫາກມີມູນຄ່າ ແຕ່ 500.000 ກີບ ລົງມາ.

- ເອກະສານທີ່ຕ້ອງເສັຍຄ່າຈົດທະບຽນ 2.000 ກີບ;
- ຈົດໝາຍບັນທຶກການແບ່ງປັນຫຶນບໍລິສັດ ທີ່ຖືກຍຸບໃຫ້ແກ່ຜູ້ຖືຫຸ້ນ ຖ້າວ່າຫຶນນັ້ນຫາກມີ ມູນຄ່າເກີນ 500.000 ກີບ ຂຶ້ນໄປ;
- ຈົດໝາຍບັນທຶກການແບ່ງປັນຊັບລະຫວ່າງ ຜູ້ມີກຳມະສິດຮ່ວມ ຖ້າວ່າຊັບນັ້ນຫາກມີມູນຄ່າເກີນກວ່າ 500.000 ກີບ ຂຶ້ນໄປ;
- ໜັງສືຍົກເລີກການຄ້ຳປະກັນໜີ້ສິນດ້ວຍຫລັກຊັບ ຫລື ດ້ວຍບຸກຄົນ ຖ້າວ່າໜີ້ສິນນັ້ນຫາກມີມູນຄ່າ ເກີນກວ່າ 500.000 ກີບ ຂຶ້ນໄປ.

<u>ມາດຕາ 11</u> : ໜັງສືທີ່ຕ້ອງເສັຍຄ່າຈົດທະບຽນ ຕາມມູນຄ່າຊັບມີດັ່ງນີ້ :

- ໜັງສືໂອນທີ່ດິນ, ເຮືອນ ທີ່ເປັນຊັບເດີມ ລະຫວ່າງຜົວເມັຍ, ໜັງສືໂອນທີ່ດິນ-ເຮືອນ ລະຫວ່າງພໍ່ແມ່ ແລະ ລູກ 0,5 % ຂອງມູນຄ່າ;
- ໜັງສືໂອນທີ່ດິນ-ເຮືອນ ລະຫວ່າງອ້າຍນ້ອງ 1% ຂອງມູນຄ່າ;
- ໜັງສືໂອນທີ່ດິນ-ເຮືອນ ລະຫວ່າງລຸງປ້ານ້າອາວ, ນ້າສາວ ແລະ ຫລານ (ຍາດຊັ້ນສາມ) 2% ຂອງມູນຄ່າ;
- ໜັງສືໂອນທີ່ດິນ-ເຮືອນ ລະຫວ່າງ ຜູ້ອື່ນໆ 3% ຂອງມູນຄ່າ;
- ໜັງສືໂອນທີ່ດິນເປົ່າຫວ່າງ ລະຫວ່າງ ຜູ້ອື່ນໆ 4% ຂອງມູນຄ່າ.

<u>ມາດຕາ 12</u> : ຄ່າຈົດທະບຽນການໂອນສິດ ເກັບກິນຜົນທີ່ດິນ-ເຮືອນ ລະຫວ່າງ :

- ຄູ່ຜົວເມັຍ ພໍ່ແມ່ ແລະ ລູກ 0,2% ຂອງມູນຄ່າ;
- ອ້າຍເອື້ອຍນ້ອງ ( ຍາດຊັ້ນສອງ) 0,3% ຂອງມູນຄ່າ;
- ລຸງປ້າ, ອາວອາ, ນ້າບ່າ, ນ້າສາວ ( ຍາດຊັ້ນສາມ ) 0,4% ຂອງມູນຄ່າ;
- ຜູ້ອື່ນໆ 0,5% ຂອງມູນຄ່າ;

<u>ມາດຕາ 13</u> : ຄ່າຈົດທະບຽນໂອນສິດນຳໃຊ້ທີ່ດິນ-ເຮືອນ;

- ໜັງສືໂອນສິດຢູ່ອາໄສທີ່ດິນ-ເຮືອນ 0,5% ຂອງມູນຄ່າການຢູ່ອາໄສ:
- ໜັງສືໂອນໃບອະນຸຍາດໃຫ້ນຳໃຊ້ທີ່ດິນ-ເຮືອນຕໍ່ໃຫ້ຜູ້ອື່ນ 1% ຂອງມູນຄ່າການຢູ່ອາໄສ.

<u>ມາດຕາ 14</u> : ຄ່າຈົດທະບຽນສັນຍາເຊົ່າທີ່ດິນ-ເຮືອນ ທຸກປະເພດ ໄລຍະຍາວ ແຕ່ 20ປີຂຶ້ນໄປ:

- ລະຫວ່າງເອກະຊົນດ້ວຍກັນ 1,5% ຂອງມູນຄ່າເຊົ່າ;

- ລະຫວ່າງລັດວິສາຫະກິດ, ການຈັດຕັ້ງລວມໝູ່ດ້ວຍກັນ ຫລື ກັບເອກະຊົນ
  1% ຂອງມູນຄ່າເຊົ່າ;
- ລະຫວ່າງລັດບໍລິຫານ ກັບເອກະຊົນ 0,5% ຂອງມູນຄ່າເຊົ່າ.

ມາດຕາ 15 : ຄ່າຈົດທະບຽນສັນຍາເຊົ່າດິນ ເຮືອນທຸກປະເພດໄລຍະຕໍ່າກວ່າ 20 ປີ :
- ລະຫວ່າງເອກະຊົນດ້ວຍກັນ 0,5% ຂອງມູນຄ່າເຊົ່າ;
- ລະຫວ່າງລັດວິສາຫະກິດ, ການຈັດຕັ້ງລວມໝູ່ດ້ວຍກັນ ຫລື ກັບເອກະຊົນ
  0,3% ຂອງມູນຄ່າເຊົ່າ;
- ລະຫວ່າງລັດບໍລິຫານ ແລະ ເອກະຊົນ 0,2% ຂອງມູນຄ່າເຊົ່າ.

ມາດຕາ 16 : ຄ່າຈົດທະບຽນສັນຍາໂອນກຳມະສິດຊັບເຄື່ອນທີ່ ( ຍານພາຫະນະ, ກົນຈັກ) ມີດັ່ງນີ້ :
- ສັນຍາຊື້ຂາຍລົດຈັກ, ລົດຍົນທຸກປະເພດ ແລະ ຍານພາຫະນະອື່ນໆ ທີ່ສັ່ງເຂົ້າມາໃໝ່ 0,2% ຂອງມູນຄ່າ;
- ສັນຍາຊື້ຂາຍລົດຈັກ ແລະ ລົດຍົນທຸກປະເພດ : ເຮືອ, ກຳປັ່ນ ທີ່ມີປ້າຍທະບຽນຢູ່ລາວແລ້ວ 1% ຂອງມູນຄ່າ;
- ສັນຍາຊື້ຂາຍເຄື່ອງຈັກຕ່າງໆ ທີ່ສັ່ງເຂົ້າມາໃໝ່ 0,2% ຂອງມູນຄ່າ;
- ສັນຍາຊື້ຂາຍ ເຄື່ອງຈັກຕ່າງໆ ທີ່ໄດ້ນຳໃຊ້ຢູ່ລາວມາກ່ອນແລ້ວ 0,5% ຂອງມູນຄ່າ;

ມາດຕາ 17 : ຄ່າຈົດທະບຽນສັນຍາເອົາເງິນ ຫລື ວັດຖຸເຂົ້າເປັນທຶນຂອງບໍລິສັດ ມີດັ່ງນີ້:
- ເປັນເຮືອນ ຫຼື ທີ່ດິນ 1% ຂອງມູນຄ່າ;
- ເປັນເງິນ ຫລື ວັດຖຸ ຊຶ່ງບໍ່ແມ່ນທີດິນ ຫລື ເຮືອນ 0,5% ຂອງມູນຄ່າ;
- ເມື່ອບໍລິສັດຫາກຖືກຍຸບ ການແບ່ງບັນທຶນທີ່ເປັນດິນ ຫລື ເຮືອນໃຫ້ແກ່ຜູ້ຖືຫຸ້ນນັ້ນ ຜູ້ຮັບກໍ່ຈະໄດ້ເສັຍຄ່າຈົດທະບຽນ 2% ຂອງມູນຄ່າຊັບ;
- ໜັງສືແບ່ງປັນຜົນກຳໄລຂອງບໍລິສັດ ຖ້າວ່າຜູ້ທີ່ແບ່ງປັນນັ້ນຫາກເປັນທີ່ດິນ ຫຼື ເຮືອນຄ່າຈົດທະບຽນໂອນກຳມະສິດໃຫ້ຄິດໄລ່ 3% ຂອງມູນຄ່າຊັບ;
- ຖ້າພູດກຳໄລນັ້ນ ຫາກເປັນເງິນ ຫລື ສິ່ງຂອງອື່ນໆໃຫ້ຄິດໄລຄ່າຈົດທະບຽນ 0,5% ຂອງມູນຄ່າ.

ມາດຕາ 18 : ຄ່າຈົດທະບຽນສັນຍາອື່ນໆ ໃຫ້ຄິດໄລ່ດັ່ງນີ້ :
- ສັນຍາກູ້ຢືມເງິນ ຫລື ຊັບສິ່ງຂອງ 0,1% ຂອງມູນຄ່າ;

- ສັນຍາຮັບເໝົາກໍ່ສ້າງ, ຂົນສົ່ງ, ບໍລິການ ແລະ ອື່ນໆ 0,1% ຂອງມູນຄ່າ;
- ສັນຍາຄໍ້າປະກັນດ້ວຍຫລັກຊັບ ຫລື ບຸກຄົນ 0,1% ຂອງມູນຄ່າກູ້ຢືມ;
- ໜັງສືໂອນໜີ້ສິນ 0,5% ຂອງໜີ້ສິນ;
- ກົດລະບຽບຂອງວິສາຫະກິດ 0,1% ຂອງທຶນວິສາຫະກິດ;
- ໜັງສືໂອນກິດຈະການການຄ້າ, ການຜະລິດ, ການບໍລິການ ແລະ ຂາຍຫຸ້ນ 0,2% ຂອງມູນຄ່າກິດຈະການ ຫລື ຫຸ້ນ.
- ສັນຍາປະກັນໄພຕ່າງໆ 0,2% ຂອງເງິນຖອກຄ່າຄໍ້າປະກັນ.

## ໝວດ III - <u>ພື້ນຖານຄິດໄລ່ຈົດທະບຽນ.</u>

<u>ມາດຕາ 19</u> : ພື້ນຖານຄິດໄລ່ຄ່າຈົດທະບຽນໃຫ້ປະຕິບັດຕາມແຕ່ລະກໍລະນີດັ່ງນີ້:

- ສຳລັບການໂອນກຳມະສິດ ແລະ ສິດຊົມໃຊ້ຊັບໃຫ້ຖືເອົາມູນຄ່າຕົວຈິງ ຂອງຊັບໃນເວລາຈົດທະບຽນ;
- ສຳຫລັບການແລກປ່ຽນຊັບປະເພດດຽວກັນ ຖ້າວ່າຊັບທີ່ແລກປ່ຽນກັນນັ້ນຫາກມີມູນຄ່າບໍ່ເທົ່າກັນ ໃຫ້ຖືເອົາຊັບທີ່ມີມູນຄ່າສູງກວ່າ ມາເປັນພື້ນຖານຄິດໄລ່ຄ່າຈົດທະບຽນ ຖ້າຫາກແມ່ນຊັບປະເພດຕ່າງກັນນັ້ນ ໃຫ້ເສັຍຄ່າຈົດທະບຽນຕາມປະເພດຊັບ;
- ສຳຫລັບການສືບທອດມູນມໍລະດົກ ໃຫ້ຄິດໄລ່ຕາມມູນຄ່າຂອງພູດທີ່ຕົກມາເປັນກຳມະສິດຂອງຜູ້ສືບທອດ ຫລັງຈາກທີ່ໄດ້ຫັກໜີ້ສິນຂອງເຈົ້າມູນອອກແລ້ວ;
- ສຳຫລັບການເອົາຊັບມາເຂົ້າກັນເປັນທຶນການຄ້າ ຫລື ເປັນກຳມະສິດລວມກັນຂອງຄູ່ຜົວເມັຍໃຫ້ຖືເອົາຈຳນວນເງິນ ຫລື ມູນຄ່າຊັບທີ່ເອົາມາເຂົ້າກັນນັ້ນ ເປັນພື້ນຖານຄິດໄລ່;
- ສຳຫລັບການຮັບເໝົາກໍ່ສ້າງ ແລະ ບໍລິການຕ່າງໆ ໃຫ້ຖືເອົາມູນຄ່າຮັບເໝົາກໍ່ສ້າງ ແລະ ບໍລິການໂດຍບໍ່ນັບຄ່າອາກອນຕົວເລກ ເຂົ້ານຳມາເປັນພື້ນຖານຄິດໄລ່.

<u>ມາດຕາ 20</u> : ໃນກໍລະນີຫາກເຫັນວ່າມູນຄ່າຊັບທີ່ນຳມາແຈ້ງຈົດທະບຽນນັ້ນ ຫາກຕໍ່າກວ່າມູນຄ່າທີ່ປະກົດຕົວໃນເຂດນັ້ນ ເຈົ້າໜ້າທີ່ຈົດທະບຽນມີສິດທວງໃຫ້ເຈົ້າຂອງໜັງສືປ່ຽນແປງມູນຄ່າໃຫ້ຖືກກັບມູນຄ່າຕົວຈິງ. ຖ້າຫາກວ່າຜູ້ກ່ຽວບໍ່ຍອມປ່ຽນແປງມູນຄ່າຕາມຕົວຈິງແລ້ວ ໃຫ້ເຈົ້າໜ້າທີ່ຈົດທະບຽນສະເໜີຄະນະກຳມະການ ຊຶ່ງປະກອບດ້ວຍເຈົ້າໜ້າທີ່ຈົດທະບຽນ, ຜູ້ຕາງໜ້າການຄ້າ, ຜູ້ຕາງໜ້າການເງິນ ແລະ ຜູ້ຕາງໜ້າອຳນາດການປົກຄອງ ທີ່ໄດ້ຢັ້ງຢືນໜັງສືເພື່ອກຳນົດມູນຄ່າທີ່ຖືກຕ້ອງ.

<u>ມາດຕາ 21</u> : ຄ່າຈົດທະບຽນຕໍ່າສຸດ ບໍ່ໃຫ້ຫຼຸດ 500 ກີບ.

ມາດຕາ 22 : ໜັງສືທຸກປະເພດ ທີ່ໄດ້ເຮັດຂຶ້ນກ່ອນວັນປະກາດໃຊ້ດຳລັດສະບັບນີ້ ທີ່ຍັງບໍ່ທັນໄດ້ຈົດທະບຽນ ເມື່ອຕ້ອງການນຳໃຊ້ກໍ່ຕ້ອງນຳມາຈົດທະບຽນ.

## ໝວດ IV - ການຍົກເວັ້ນຄ່າຈົດທະບຽນ.

ມາດຕາ 23 : ໃຫ້ຍົກເວັ້ນຄ່າຈົດທະບຽນເອກະສານດັ່ງລຸ່ມນີ້ :

- ໜັງສືການໂອນກຳມະສິດຊັບທຸກປະເພດ ຢູ່ ສປປ ລາວ ໃຫ້ແກ່ລັດຖະບານ ຫລື ສະຖານທູດ ແລະ ອົງການຈັດຕັ້ງສາກົນທີ່ຕັ້ງຢູ່ ສປປ ລາວ ໃນເມື່ອມີສັນຍາຍົກເວັ້ນຊຶ່ງກັນ ແລະ ກັນ ຫລື ການຍົກເວັ້ນອື່ນໆ;
- ສັນຍາຊ່ວຍເຫລືອ, ກູ້ຢືມລະຫວ່າງລັດຖະບານລາວ ກັບຕ່າງປະເທດ ຫລື ກັບອົງການຈັດຕັ້ງອື່ນໆ;
- ໜັງສືກ່ຽວກັບການເໝົາຊື້ທີ່ດິນ ເຮືອນ ເອກະຊົນມາເປັນຂອງລັດ;
- ໜັງສືທີ່ແມ່ນລັດເປັນຜູ້ເສັຍຄ່າຈົດທະບຽນ.

## ໝວດ V - ກຳນົດເວລາໃຫ້ນຳເອົາເອກະສານມາຈົດທະບຽນ.

ມາດຕາ 24 : ກຳນົດເວລາໃຫ້ມາແຈ້ງຈົດທະບຽນ ມີດັ່ງນີ້ :

- ນຶ່ງເດືອນ : ສັນຍາໂອນກຳມະສິດຊັບທີ່ມີທະບຽນ ແລະ ສັນຍາທີ່ບົ່ງບອກເຖິງການໄດ້ເງິນ ຫລື ໄດ້ຊັບ;
- ສອງເດືອນ : ກົດລະບຽບຂອງວິສາຫະກິດ, ສັນຍາຮັບເໝົາຕ່າງໆ;
- ສາມເດືອນ : ໃບແຈ້ງຮັບມູນມໍລະດົກຢູ່ພາຍໃນປະເທດ;
- ຫົກເດືອນ : ໃບແຈ້ງຮັບມູນມໍລະດົກຢູ່ຕ່າງປະເທດ;

ກຳນົດເວລາມາແຈ້ງຈົດທະບຽນໃຫ້ນັບແຕ່ມື້ເຈົ້າໜ້າທີ່ໄດ້ຢັ້ງຢືນເອກະສານເປັນຕົ້ນໄປ ຖ້າວ່າວັນສຸດທ້າຍຂອງກຳນົດການຈົດທະບຽນນັ້ນ ຫາກແມ່ນມື້ວັນພັກລັດຖະການແລ້ວ ກໍໃຫ້ເລື່ອນໄປໃສ່ວັນລັດຖະການໃນມື້ຖັດໄປນັ້ນ;

ນອກຈາກເອກະສານທີ່ໄດ້ກ່າວໄວ້ຂ້າງເທິງນີ້ແລ້ວ ການມາແຈ້ງຈົດທະບຽນແມ່ນບໍ່ມີກຳນົດ.

## ໝວດ VI - ສະຖານທີ່ແຈ້ງຈົດທະບຽນ ແລະ ຜູ້ຮັບຜິດຊອບເສຍຄ່າຈົດທະບຽນ.

ມາດຕາ 25 : ເອກະສານກ່ຽວກັບທີ່ດິນ ແລະ ເຮືອນ, ທຶນການຄ້າ ແລະ ຊັບສິ່ງຂອງທີ່ມີການ

ຂຶ້ນທະບຽນ ຕ້ອງເອົາໄປຈົດທະບຽນຢູ່ຫ້ອງການຄຸ້ມຄອງການຈົດທະບຽນບ່ອນຊັບ ຫລື ສຳນັກງານວິສາຫະກິດຕັ້ງຢູ່;

- ສິ່ງຂອງທີ່ບໍ່ມີການຂຶ້ນທະບຽນ ແລະ ເປັນຊັບທີ່ເຄື່ອນທີ່ໄດ້ ຕ້ອງເອົາໄປຈົດທະບຽນຢູ່ ຫ້ອງການຄຸ້ມຄອງການຈົດທະບຽນບ່ອນຢູ່ຂອງຜູ້ໃຊ້ໜັງສື;
- ຈົດໝາຍບັນທຶກການສືບທອດມູນມໍລະດົກ ທີ່ບໍ່ກ່ຽວກັບທີ່ດິນ ແລະ ເຮືອນ ຕ້ອງເອົາໄປຈົດທະບຽນຢູ່ຫ້ອງການຄຸ້ມຄອງການຈົດທະບຽນໃນເຂດທີ່ເຈົ້າມູນມີທີ່ຢູ່ປະຈຳ.

<u>ມາດຕາ 26 </u>: ຜູ້ຮັບຜິດຊອບເສັຍຄ່າຈົດທະບຽນ ແມ່ນຜູ້ມາຮ້ອງຂໍໃຫ້ຈົດທະບຽນ.

## ໝວດທີ VIII - <u>ມາດຕະການຕໍ່ຜູ້ລະເມີດ.</u>

<u>ມາດຕາ 27</u> : ບຸກຄົນໃດຫາກໄດ້ລະເມີດດຳລັດສະບັບນີ້ ຈະຖືກປະຕິບັດມາດຕະການດັ່ງຕໍ່ລົງໄປນີ້ :

- ຈະຖືກປັບໃໝ 5% ຂອງເງິນທີ່ຈະຕ້ອງເສັຍ ແຕ່ລະເດືອນ ທີ່ມີການຊັກຊ້າ ແຕ່ບໍ່ໃຫ້ເກີນ 100% ຂອງຄ່າຈົດທະບຽນ. ສຳຫລັບຜູ້ທີ່ບໍ່ເອົາໜັງສືມາແຈ້ງຈົດທະບຽນຕາມກຳນົດເວລາທີ່ໄດ້ບົ່ງໄວ້ໃນມາດຕາ 24 ຂອງດຳລັດສະບັບນີ້ ຈະຖືກປັບໃໝ 0,5% ຂອງຄ່າຈົດທະບຽນ, ສຳຫລັບຜູ້ທີ່ແຈ້ງ ສາຍຍາດບໍ່ຖືກຕົວຈິງ ເພື່ອຫລຸດຜ່ອນຄ່າຈົດທະບຽນຈະປັບໃໝ 1 ເທົ່າຂອງຄ່າຈົດທະບຽນ.

<u>ມາດຕາ 28</u> : ຜູ້ທີ່ມີຄວາມຮັບຜິດຊອບຮ່ວມກັນໃນການເສັຍຄ່າຈົດທະບຽນ ແລະ ຄ່າປັບໃໝທີ່ໄດ້ກ່າວໄວ້ໃນດຳລັດສະບັບນີ້ ມີດັ່ງນີ້ :

- ຜູ້ຮັບມູນມໍລະດົກ;
- ຜູ້ຊື້ຊັບລວມກັນ;
- ຜູ້ເອົາຊັບແລກປ່ຽນກັນ;
- ຜູ້ເຊົ່າຊັບນຳກັນ;
- ຄູ່ສັນຍາທັງສອງຝ່າຍ.

## ໝວດ VIIII - <u>ການຈັດຕັ້ງປະຕິບັດ.</u>

<u>ມາດຕາ 29</u> : ໃຫ້ອຳນາດການປົກຄອງ ແລະ ອົງການທີ່ມີໜ້າທີ່ອອກ ຫລື ຢັ້ງຢືນໜັງສືທີ່ຕ້ອງຈົດທະບຽນນັ້ນ ຕ້ອງແນະນຳໃຫ້ເອົາໜັງສືດັ່ງກ່າວໄປຈົດທະບຽນ.

มาตรา 30 : ห้ามสำนักงานองค์การลัดทุกขั้น รับเอาหนังสือ หลือ สัญญาที่จะต้องจดทะ

<u>ມາດຕາ 30</u> : ຫ້າມສຳນັກງານອົງການລັດທຸກຂັ້ນ ຮັບເອົາໜັງສື ຫລື ສັນຍາທີ່ຈະຕ້ອງຈົດທະບຽນ ແຕ່ບໍ່ທັນໄດ້ຈົດທະບຽນໄປພິຈາລະນາເປັນຫລັກຖານ.

<u>ມາດຕາ 31</u> : ມອບໃຫ້ກະຊວງການເງິນ ສົມທົບກັບບັນດາກະຊວງ, ອົງການທຽບເທົ່າ, ຄະນະກຳມະການປົກຄອງແຂວງ ແລະ ກຳແພງນະຄອນ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງນຳໄປຈັດຕັ້ງປະຕິບັດຕາມໜ້າທີ່ຂອງໃຜລາວ.

<u>ມາດຕາ 32</u> : ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 13 03 93
ເຊັນແທນ ນາຍົກລັດຖະມົນຕີ
ຮອງນາຍົກລັດຖະມົນຕີ,

ຄຳພຸຍ ແກ້ວບົວລະພາ